ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ. 0 0 0 0 7 3 6 7

ນະຄອນຫຼວງວຽງຈັນ, ວັນທີ: 29 ຕຸລາ 2021

ຮຽນ: ທ່ານ ເລຂາທິການ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ
ທ່ານ ຜູ້ຖືຮຸ້ນ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິຂອງກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ປະຈຳປີ 2021 ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 28 ມັງກອນ 2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ເປັນກຽດຂໍແຈ້ງມະຕິຂອງ ກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ປະຈຳປີ 2021 ໃນວັນທີ 29 ຕຸລາ 2021 ເວລາ 11:00 ຕອນເຊົ້າ ທີ່ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ຊັ້ນ 3,ຕຶກ NNN, ບ້ານ ໂພນສີນວນ ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມທັງໝົດ 06 ທ່ານຊຶ່ງແມ່ນ ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ, ຖືຮຸ້ນລວມທັງໝົດ 297,878,600 ຮຸ້ນ ຫຼື 98,80% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມມີມະຕິດັ່ງນີ້:

ວາລະທີ 1 **ພິຈາລະນາຮັບຮອງເອົາແລະອະນຸມັດ ການກູ້ຢືມເງິນຈາກ ບໍລິສັດ Varteni Investments Limited ຈຳນວນ 20,000,000 ໂດລາ (ຊາວລ້ານ ໂດລາ).**

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 297,878,600 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 297,878,600 ສຽງ ຫຼື ເທົ່າກັບ 100%

ວາລະທີ 2 **ພິຈາລະນາຮັບຮອງເອົາແລະອະນຸມັດການກູ້ຢືມເງິນຈາກ ຄຸ່ຮ່ວມພາຍໃນປະເທດ ຈຳນວນ 5,000,000 ໂດລາ (ຫ້າລ້ານ ໂດລາ).**

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 297,878,600 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 297,878,600 ສຽງ ຫຼື ເທົ່າກັບ 100%

ວາລະທີ 3 **ພິຈາລະນາ ແລະ ຮັບຮອງເອົາການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ ຈຳນວນ 4,000,000-12,000,000 ໂດລາ (ສີ່ລ້ານ ຫາ ສິບສອງລ້ານ ໂດລາ).**

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 297,878,600 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 297,878,600 ສຽງ ຫຼື ເທົ່າກັບ 100%

ວາລະທີ 4 **ພິຈາລະນາຮັບຮອງເອົາ ແລະ ອະນຸມັດ ແຜນການຂະຫຍາຍທຸລະກິດ ໂດຍເປີດສາຂາໃນ 11 ແລະ ເປີດໜ່ວຍບໍລິການ ປະມານ 20-25 ໜ່ວຍ ໃນລາວ**

ກອງປະຊຸມໄດ້ລົງມະຕິ ດ້ວຍຄະແນນສຽງເປັນເອກະພາບ, ລາຍລະອຽດດັ່ງຕໍ່ໄປນີ້:

- ເຫັນດີ 297,878,600 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 297,878,600 ສຽງ ຫຼື ເທົ່າກັບ 100%

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆ ດັ່ງນັ້ນ ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມ ໃນເວລາ 11:50 ຕອນເຊົ້າ.

ດ້ວຍຄວາມນັບຖືຢ່າງສູງ
ຜູ້ຕາງໜ້າກອງປະຊຸມ

ທ່ານ ແອັດນັນ ກາມີ